# ເພື່ອນຂັນເງິນ



*ຂັນເງິນ ວິລາວັນ ຜູ້ໃຈກວ້າງຂວາງ*

ຄິດເຖິງຄາວແຕ່ກີ້ ສມັຍຢູ່ໂຮງຮຽນ
ເປັນເພື່ອນນາງຂັນເງິນ ເພິ່ນຜູ້ດີເຫລືອລົ້ນ
ຄົນຜູ້ໃດມາພໍ້ ນາງຂັນເງິນກໍຊົມຊື່ນ
ມີແຕ່ຄວາມຄຶກຄື້ນ ໃຈຟື້ນເມື່ອພົບລາວ ແທ້ໃດ

ຄິດເຫັນຄາວໄປຫລິ້ນ ກິນໝາກຍົມບ້ານເພິ່ນ ຂັນເງິນເອີຍ
ແມ່ຂອງເຈົ້າກໍເອີ້ນ ເຊີນເຂົ້າແວ່ພັກເຮືອນ
ພວກເຮົາເປັນໝູ່ເພື້ອນ ບໍ່ໄດ້ປ່ຽນແປຜັນ
ຄວາມສັມພັນຄືງເດີມ ດັ່ງທີ່ມີຄາວກີ້

ບາດວ່າຕົກມາພີ້ ສາມສິບປີໄກຫ່າງ ກັນນໍ
ເຈົ້າກໍຍັງບໍ່ຕ່າງ ທາງຈິດໃຈວາດເວົ້າ ຍັງຄືເຄົ້າກ່ອນຫລັງ ເງິນເອີຍ
ນັບຕັ້ງແຕ່ມື້ນັ້ນ ວັນທີ່ພົບ Reunion
ເຈົ້າຍັງພຽນໂທຫາ ສົ່ງມາບໍ່ມີເວັ້ນ

ເປັນກຳລັງໃຈໃຫ້ ຊູໃຈທຸກເຊົ້າຄ່ຳ ໝູ່ເອີຍ
ເຮົາຈະຈຳຈື່ໄວ້ ໃຈເພື້ອນເພື່ອນຜູ່ດີ
ຄັນໄດ້ໝູ່ແບບນີ້ ຊີວິດຢູ່ຍືນຍາວ ອີ່ຫລີໃດ
ໄດ້ໝູ່ລາວຄືຂັນເງິນ ກໍເພີດເພີນໃຈໄດ້

ນິດໄສຂັນເງິນນັ້ນ ມັກສັມພັນກັບໝູ່ຄູ່
ລາວເປັນຄົນຜູ້ຮູ້ ບໍ່ຖືຊັ້ນແບ່ງຄົນ
ຄົນຈົນຄືເຮົານີ້ ຂັນເງິນກໍບໍ່ວ່າ
ທັງບິດາມານດາ ກໍຍັງຕ້ອນຮັບເຂົ້າ ເຮືອນຢ້າວພັກເຊົາ ນັ້ນນາ

ເຣື່ອງນິ່ງເຮົາຢາກເວົ້າ ເຣື່ອງເຈົ້າມັກເຫລືອຫລາຍ ຂັນເງິນເອີຍ
ເຣື່ອງແຕ່ງກາຍຂອງນາງ ເພິ່ນມັກງາມແທ້ເດເຈົ້າ
ບໍ່ແມ່ນເຮົາຫາເວົ້າ ແປງເອົາເວົ້າໃສ່ເພິ່ນ ໃດເດີ
ມັກສະອາດເຫລືອເກີນ ເພິ່ນເປັນຄົນລຽບລ້ອຍ ຕາມຂ້ອຍໄດ້ເບິ່ງມາ

ອີກອັນນຶ່ງຢ່າທ້າ      ຢ່າເວົ້າວ່າໃຫ້ຜິດໃຈ ໃດເນີ
ຈະສລົບໄວໆ      ເພິ່ນອ່ອນໃຈ ແທ້ໃດເຈົ້າ
ໃນເມື່ອຂັນເງິນເວົ້າ      ສົມວ່າລາວ-ຄົນມັກມ່ວນ
ຊວນໃຫ້ຫົວຊື່ນຊ້ອຍ      ຂັນເງິນນ້ອຍນັ້ນມັກຫລາຍ

ຄົນຜູ້ນີ້ບໍ່ຮ້າຍ      ຖ້າບໍ່ເຮັດຜິດໃຈ
ຫາກມີແນວສົງໄສ      ມັກແກ້ໄຂໄວໆໂລດ
ໂກດຫລືຄວາມຂັດແຍ້ງ      ນາງແພງເງິນບໍ່ມັກ
ຮັກເພື່ອນຝູງພວກພ້ອງ      ຄືພີ່ນ້ອງຮ່ວມເຮືອນ ແທ້ໃດ

ເຮົານີ້ສັງເກດໄດ້      ໃຈເພິ່ນຖ່ອມລົງຫລາຍ
ຄົນຈິ່ງມີໃຈຮັກ      ເພື່ອນສະຫາຍຄົນນີ້
ເປັນຄົນດີສີກ້າ      ບໍ່ອິດສາຄົນອື່ນ
ຂໍຢັ້ງຢືນວ່າຜູ້ນີ້      ລາວດີແທ້ອີ່ຫລີ ໝູ່ເອີຍ

ເມື່ອໄດ້ຮູ້ຈັ່ງຊີ້      ເຮົາຈິ່ງເຊື່ອໃຈໂຕ ຂັນເງິນເອີຍ
ຈິ່ງໄດ້ໂງມາຂໍ      ເພິ່ງພາເຈົ້າຕອນທ້າຍ
ກ່ອນພາກໄລວັນນັ້ນ      ລາກັນຍາມຊິຈາກ
ຂໍຝາກຄູ່ຮັກໝັ້ນ      ດວງຈັນນັ້ນໃຫ້ເບິ່ງແຍງ ແນ່ເດີ

ນີ້ບໍ່ແມ່ນຕັ້ງແກ້ງ      ເຮົາເວົ້າແຕ່ງຖແລງເປັນ ເອົາເດີ
ເຮົາໄດ້ເຫັນກັບຕາ      ຈິ່ງວ່າມາໄຂໄວ້
ໃຜຜູ້ມາພານພໍ້      ຂັນເງິນນໍໃຫ້ຍໍຍື່ນ
ສົມວ່າແມ່ເພິ່ນເອີ້ນ      ຂັນເງິນເຈົ້າຊື່ນາງ ແທ້ໃດ

ເຫດພໍ່ແມ່ເຈົ້າຕັ້ງ      ເລືອກຊື່ວ່າ "ຂັນເງິນ"
ເພາະເຈົ້າເປັນຄືຂັນ      ເບີກບານສເມີດ້າມ
ຂັນເງິນງາມເຫລືອລົ້ນ      ແດນຄົນສວຍສະງ່າ
ພອນພຣະເຈົ້າສົ່ງມາ  ຂ້າຈິ່ງໄດ້ພົບພໍ້  ເປັນເພື້ອນເພື່ອນຂັນ  ເງິນເອີຍ

*Thanks for being such a wonderful friend to all of us especially to KMJ.*
*ກະຕ່າຍໝາຍຈັນ (KMJ)*